# ບົດທີ 5

# ລະຍະ 52 ມື້ຕັ້ງແຕ່ການສິ້ນພະຊົນຈົນກວ່າພະວິນຍານລົງມາ

**1** ໃນບົດຮຽນນີ້ ເຮົາຈະສຶກສາກ່ຽວກັບໄລຍະເວລາ 52 ມື້ລະຫວ່າງທີ່ພະເຢຊູຕາຍ ແລະພະວິນຍານມາ. ໃນ 52 ມື້ມີເຫດການສຳຄັນ 4 ປະການຄື:

* ການສິ້ນພະຊົນ
* ການຄືນພະຊົນ
* ການສະເດັດສູ່ສະຫວັນ
* ພະວິນຍານບໍລິສຸດສະເດັດມາ

ທັງ 4 ປະການນີ້ຖືກການບັນທຶກໄວ້ໃນສອງບົດສຸດທ້າຍຂອງມັດທາຍ ແລະສອງບົດທຳອິດຂອງກິດຈະ ການ.

ກ 


ລາຍງານເລື່ອງເຫດການໃດ ?

______________________________

ຂ 


ລາຍງານເລື່ອງເຫດການໃດ ?

______________________________

ຄ 


ລາຍງານເລື່ອງເຫດການໃດ ?

______________________________

ງ 


ລາຍງານເລື່ອງເຫດການໃດ ?

______________________________

**2** ກ. ການສິ້ນພະຊົນຖືກລາຍງານໃນບົດໃດ? ____________________

ຂ. ການຄືນພະຊົນໃນບົດໃດ? ____________________

ຄ. ການສະເດັດສູ່ສະຫວັນໃນບົດໃດ? ____________________

ງ. ບົດໃດບັນທຶກເລື່ອງການສະເດັດມາຂອງພະວິນຍານບໍລິສຸດ? ____________________

*ເຫດການທັງ 4 ປະການນັ້ນເກີດຂຶ້ນໃນ 52 ວັນ.*
*ຖ້າບໍ່ມີເຫດການທັງ 4 ປະການນັ້ນ*

** ຈະບໍ່ມີຂ່າວປະເສີດ*
** ຈະບໍ່ມີການລອດຈາກຜິດບາບ*
** ຈະບໍ່ມີຄຣິດສະຕະຈັກ*
** ຈະບໍ່ມີຄວາມຫວັງຂຶ້ນສະຫວັນ*



**3** ກຈກ 1:1-5 ສະຫລູບເລື່ອງ 4 ປະການນັ້ນ:

ກ. ຂໍ້ 2 ທີ່ວ່າ "ຈົນເຖິງວັນທີ່ພະເຈົ້າຊົງຮັບພະອົງຂຶ້ນເມືອ" ອ້າງເຖິງເຫດການໃດ?

____________________

ຂ. ຂໍ້ 3 ທີ່ວ່າ "ພະອົງຊົງທົນທຸກທໍລະມານ" ອ້າງເຖິງເຫດການໃດ?

____________________

ຄ. ຂໍ້ 3 ທີ່ວ່າຊ້ຳອີກ "ຊົງສະແດງພະອົງແກ່ຄົນພວກນັ້ນ" ກ່າວເຖິງຫຍັງ?

____________________

ງ. ໃນຂໍ້ 4 ທີ່ວ່າ "ໃຫ້ຄອຍຮັບຕາມພະສັນຍາຂອງພະບິດາ" ອ້າງເຖິງຫຍັງ?

____________________

**4** ເຫດການ 4 ປະການນັ້ນເປັນພື້ນຖານຂອງຂ່າວປະເສີດທີ່ພວກສາວົກອອກໄປປະກາດ.

ກ. ໃນ ກຈກ 2:23 ເປໂຕອ້າງເຖິງເຫດການໃດ? ____________________

ຂ. ໃນ ກຈກ 2:32 ອ້າງເຖິງເຫດການໃດ? ____________________

ຄ. ແລະອີກໃນ ກຈກ 2:33 ເດ? ____________________

____________________

**5** ເຮົານັບ 52 ມື້ນັ້ນໄດ້ເພາະເຮົາຮູ້ຈຳນວນມື້ລະຫວ່າງເຫດການແຕ່ລະປະການ.

ກ. ມີຈັກມື້ລະຫວ່າງການສິ້ນພະຊົນ ແລະການຄືນພະຊົນ? (ມທ 16:21) __________

ຂ. ມີຈັກມື້ລະຫວ່າງການຄືນພະຊົນ ແລະການສະເດັດສູ່ສະຫວັນ? (ກຈກ 1:3) ________

**6** ກ. ຖ້າລວມແລ້ວ ມີຈັກມື້ລະຫວ່າງການສິ້ນພະຊົນ ແລະການສະເດັດສູ່ສະຫວັນ? ________

ຂ. ໃນ ກຈກ 1:5 ເຫັນວ່າໃນບໍ່ເທິງ ພວກສາວົກຈະໄດ້ຮັບບັບຕິສະມາດ້ວຍຫຍັງ? ________

____________________

**7** ແຕ່ຍັງມີວິທີນັບມື້ຢ່າງລະອຽດກວ່ານັ້ນອີກ. ໃນ ກຈກ 2:1-4 ເຫັນວ່າພະວິນຍານບໍລິສຸດສະເດັດມາໃນວັນເທດສະ ການໃດ? ______________________________________

**8** ໃນພາສາກະລິກ ຄຳວ່າ "ເພັນເຕຄໍສະເຕ" ແປວ່າ "ຫ້າສິບ" ເພາະເທດສະການນັ້ນຕົກພໍດີ 50 ວັນຫຼັງຈາກວັນອາທິດທີ່ ຕໍ່ມາຈາກເທດສະການປັດສະຄາ.

ກ. ພະເຢຊູສິ້ນພະຊົນໃນວັນເທດສະການປັດສະຄາ ໃນວັນອາທິດຕໍ່ໄປມີເຫດການສຳຄັນໃດ?

______________________________________________________________

ຂ. ຫຼັງຈາກວັນຄືນພະຊົນພໍດີ 50 ວັນມີເຫດການສຳຄັນໃດ? ______________________

______________________________________________________________

**9** ກ. ຄຳວ່າ "ເພັນເຕຄໍສະເຕ" ແປວ່າຫຍັງ? _________________________________

ຂ. ພະວິນຍານບໍລິສຸດສະເດັດມາຫຼັງຈາກການຄືນພະຊົນຈັກມື້? ___________________

**10** ກ. ຈາກການສິ້ນພະຊົນຈົນເຖິງການຄືນພະຊົນມີຈັກມື້? _________________________

ຂ. ຈາກການຄືນພະຊົນເຖິງການສະເດັດສູ່ສະຫວັນມີຈັກມື້? ______________________

ຄ. ຈາກການສະເດັດສູ່ຫວັນເຖິງວັນເພັນເຕຄໍສະເຕຈັກມື້? ______________________

ງ. ລວມກັນຈັກມື້? ________________________________________________

**ແນ່!** *ຫົວຂໍ້ບົດນີ້ວ່າ 52 ມື້ ແຕ່ທີ່ຈິງມີ 53 ມື້ຕີ! ບໍ່ແມ່ນ ເຮົານັບວັນອາທິດ ທີ່ພະເຢຊູຄືນພະຊົນມາສອງເທື່ອ. ນັບກັບ 3 ມື້ລະຫວ່າງທີ່ພະເຢຊູສິ້ນພະຊົນ ແລະນັບອີກໃນ 40 ມື້ລະຫວ່າງການຄືນພະຊົນແລະການສະເດັດສູ່ສະຫວັນ.*

**11** ທີ່ຈິງມີຈັກວັນລະຫວ່າງການສິ້ນພະຊົນ ແລະການສະເດັດມາຂອງພະວິນຍານບໍລິສຸດ?_____

*ຕໍ່ໄປເຮົາຈະສຶກສາກ່ຽວກັບເລື່ອງຕ່າງໆ ລະຫວ່າງເຫດການເຫຼົ່ານັ້ນ.*

## ລະຫວ່າງການສິ້ນພະຊົນເຖິງການຄືນພະຊົນ

(ໃຫ້ອ່ານ ມັດທາຍ 27:57-61 ແລະກິດຈະການ 2:27-32)

**12** ເມື່ອຄົນຕາຍແລ້ວຈິດວິນຍານອອກຈາກຮ່າງກາຍໄປ.

ກ. ເມື່ອພະອົງຕາຍແລ້ວ ເຂົາເອົາພະສົບໄປໄວ້ບ່ອນໃດ? ______________________

ຂ. ອຸບໂມງນັ້ນເປັນຂອງໃຜ? _______________________________________

ຄ. ໃນກິດຈະການ 2:27 ເຫັນວ່າຈິດວິນຍານຂອງພະອົງໄປໃສຄາວໜຶ່ງ? _____________

**13** ຄຳວ່າ "ແດນມໍລະນາ" ເປັນສະຖານທີ່ຈິດວິນຍານຄົນທຸກຄົນໄປໃນເມື່ອເວລາເຂົາຕາຍ ບໍ່ແມ່ນອັນດຽວກັນກັບນະຣົກ. ແດນມໍລະນານັ້ນອ້າງເຖິງສະຖານທີ່ຈິດວິນຍານຂອງຄົນຕາຍຈະໄປຢູ່ຄາວໜຶ່ງ. ແບ່ງເປັນສອງພາກຄືພາກທີໜຶ່ງສຳລັບຄົນຊອບທຳ ແລະອີກພາກໜຶ່ງສຳລັບຄົນອະທຳ. ຄຳວ່າ "ນະຣົກ" ເປັນອີກຄຳໜຶ່ງຕ່າງຫາກທີ່ອ້າງ ເຖິງບ່ອນທໍລະມານຄົນບາບໂດຍໄຟທີ່ບໍ່ຮູ້ມອດ. ຄຳວ່າ "ແດນມໍລະນາ" ໝາຍເຖິງຫຍັງ? (ເລືອກ)

ກ. ຄືນະຣົກ ມີແຕ່ຄົນອະທຳຈະຕົກໃນບ່ອນນັ້ນ

ຂ. ຄືສະຫວັນ ມີແຕ່ຄົນທີ່ໄວ້ວາງໃຈກັບພະເຍຊູຈະໄປບ່ອນນັ້ນ.

ຄ. ບ່ອນຄົນຕາຍໃນສະໄໝພະຄຳພີເດີມໄປ.

**14** ໃນກິດຈະການ 2:31 ເຫັນວ່າພະເຍຊູໄປແດນມໍລະນາ ຫຼືໄປນະຣົກ? ______________

**15** ແມ່ນບ່ອນໃດທີ່ມີໄຟບໍ່ຮູ້ມອດ? ________________________________________

**16** ໃນຫຼັກສູດມັດທາຍເຫຼັ້ມທີ 2 ເຮົາໄດ້ຮຽນມາເລື່ອງ "ຫຼັກຄວາມເຊື່ອຕາມເຫຼົ່າອັກຄະສາວົກ". ກ່ອນສາລະບານໃນບົດເພງຄຼິດສະຕຽນ ມີສ່ວນໜຶ່ງທີ່ກ່າວວ່າ: ພະອົງຊົງຖືກບັນຈຸໃນອຸບໂມງ ສະເດັດໄປສູ່ແດນມໍລະນາໃນວັນຖ້ວນສາມພະອົງຊົງຄືນພະຊົນ... ພະອົງລົງໄປສູ່ນະຣົກ ຫຼື ໄປເຖິງສະຖານທີ່ຈິດວິນຍານຂອງຄົນຕາຍຄອຍຖ້າຢູ່ຄືແດນມໍລະນາ? ______________

*ເລື່ອງນີ້ ເປັນເລື່ອງທີ່ຕີຄວາມໝາຍຍາກແທ້.*

* *ມີບາງຄົນທີ່ຖືວ່າ ພະອົງລົງໄປຖືກທໍລະມານແທນບາບຂອງເຮົາໃນ 3 ວັນນັ້ນ (1 ເປໂຕ 3:18)*
* *ມີບາງຄົນທີ່ຖືວ່າ ການ "ລົງແດນມໍລະນາ" ນັ້ນອ້າງເຖິງແຕ່ການຝັງສົບຂອງພະອົງໃນອຸບໂມງ.*
* *ມີບາງຄົນທີ່ຖືວ່າ ພະອົງລົງໄປເອົາວິນຍານຄົນຊອບທຳຈາກສະໄໝພະຄຳພີເດີມຂຶ້ນສະຫວັນເພາະຄວາມລອດສຳເລັດໂດຍພະເຍຊູຕາຍທີ່ໄມ້ກາງແຂນ. (ເອເຟໂຊ 4:7-10)*
* *ບາງຄົນຖືວ່າ ພະເຍຊູໄປເທດສະໜາໃຫ້ຄົນຕາຍຟັງ. (1 ເປໂຕ 3:18-20)*

**17** ເປັນຢ່າງໃດກໍຕາມ ເຮົາຮູ້ຢູ່ວ່າ ພະອົງເຂົ້າຮ່ວມກັບສະພາບຂອງມະນຸດໃນທຸກປະການ ເຖິງຈະຕາຍແລະລົງ ___________________________________ ກໍຕາມ. (ຕື່ມຄວາມຂາດ)

**18** ມີຫຼາຍຄົນທີ່ບໍ່ຢາກຮັບພິຈາລະນາເລື່ອງຄວາມຕາຍ ເຂົາບໍ່ຢາກໃຫ້ຈິດວິນຍານແຍກອອກຈາກຮ່າງກາຍ. ຝ່າຍຄົນທີ່ໄວ້ໃຈກັບພະເຍຊູກໍບໍ່ຕ້ອງຢ້ານ. ພສສ 23:4 ກ່າວວ່າ: "ເຖິງແມ່ນວ່າທາງຈະຜ່ານຄວາມມືດມົນອັນເລິກລັບ ຂ້ານ້ອຍກໍຈະບໍ່ຢ້ານເພາະວ່າພະອົງຊົງຢູ່ກັບຂ້ານ້ອຍ". ພະອົງສາມາດຢູ່ກັບເຮົາໃນເວລາທີ່ເຮົາຈະລັບຕາລາໂລກໄປເພາະ

ກ. ຮ່າງກາຍຂອງພະອົງຖືກຝັງໄວ້ໃສ? __________

ຂ. ຈິດວິນຍານຂອງພະອົງລົງໃສ? ______________



*ແຕ່ຝ່າຍພະອົງບໍ່ສິ້ນສຸດກັບຄວາມຕາຍ ເພາະພະອົງຍັງຄືນພະຊົນດ້ວຍ.*

## ລະຫວ່າງການຄືນພະຊົນເຖິງການສະເດັດສູ່ສະຫວັນ

**19** ກ. ມີຈັກມື້ຕັ້ງແຕ່ພະອົງຄືນພະຊົນຈົນເຖິງສະເດັດສູ່ສະຫວັນ? ___________________

ຂ. ໃນ 40 ມື້ນັ້ນ ພະອົງປາກົດຕໍ່ພວກລູກສິດຈັກເທື່ອ? ___________________________

**20** ການຄືນພະຊົນຂອງພະເຢຊູ ພິສູດດັ່ງຕໍ່ໄປນີ້: (ຕື່ມຄວາມທີ່ຂາດ)

ກ. ພະເຢຊູເປັນທັງມະນຸດແທ້ ທັງ ________________________________________ແທ້.

ຂ. ______________________________ ຊົງຮັບການບູຊາຂອງພະເຢຊູແທນຜິດບາບເຮົາ.

ຄ. ໃນອະນາຄົດພວກເຮົາທີ່ໄວ້ວາງໃຈໃນພະເຢຊູ ຈະຄືນຈາກຕາຍໂດຍມີຮ່າງກາຍທີ່ປ່ຽນ _________________________________________________ ໃໝ່ເໝືອນພະເຢຊູ.

**21** ເຖິງວ່າຄາວ 3 ມື້ນັ້ນ ຈິດວິນຍານຂອງພະເຢຊູແຍກອອກຈາກຮ່າງກາຍ ຕໍ່ໄປໃນເມື່ອຄືນພະຊົນແລ້ວກັບມາ ຮວມ ອີກ. ໃຫ້ອ່ານ ກຈກ 2:31-32 ອີກ

ກ. ຈິດວິນຍານຂອງພະອົງບໍ່ໄດ້ຖືກປະຖິ້ມໃນບ່ອນໃດ? ___________________________

ຂ. ເນື້ອຕົວຂອງພະອົງບໍ່ຖືກຫຍັງ? __________________________________________

ຄ. ໃນມື້ທີ່ພະອົງຄືນພະຊົນຮ່າງກາຍຂອງພະອົງກັບມາຮວມກັບຫຍັງອີກ? ____________

**22** ກ. ທີ່ພະສົບຂອງພະອົງຖືກຝັງໄວ້ ແລະທີ່ຈິດວິນຍານຂອງພະອົງລົງໄປແດນມໍລະນາ ສະແດງວ່າ ________________ ແລະ ________________ແຍກຈາກກັນຊົ່ວຄາວ. (ຕື່ມ)

ຂ. ໃນເມື່ອພະເຢຊູຄືນພະຊົນແລ້ວທັງ ___________ ແລະ __________ ຮວມເຂົ້າກັນອີກ.

*ເທື່ອໃດທີ່ເຮົາຄຶດເລື່ອງການສິ້ນພະຊົນ, ການຝັງສົບ ແລະການລົງໄປແດນມໍລະນານັ້ນ ຢ່າໃຫ້ຫຼົງລືມຈັກເທື່ອວ່າ ພະອົງຊະນະຄວາມຕາຍໂດຍຄືນພະຊົນ.*

**23** ຄໍາເວົ້າໃດຕໍ່ໄປນີ້ ສະແດງທ່າທີຂອງຄົນທີ່ໄວ້ວາງໃຈກັບພະເຢຊູ (ເລືອກ)

ກ. ______ "ຂ້ອຍເປັນຄຣິດສະຕຽນກໍແມ່ນຢູ່ ແຕ່ຍັງຢ້ານກົວວ່າ ເມື່ອລັບຕາລາໂລກໄປແລ້ວ ຈິດວິນຍານ ຈະຕ້ອງຜ່ານ ຄວາມມືດອັນເລິກລັບ".

ຂ. ______ "ຂ້ອຍເປັນຄຣິດສະຕຽນກໍແມ່ນຢູ່ ແຕ່ທີ່ຮ່າງກາຍຈະເປື່ອຍເນົ່າໄປກໍບໍ່ຖືກໃຈຈັກນ້ອຍ".

ຄ. ______ "ເຖິງວ່າຂ້ອຍບໍ່ຟ້າວຟັ່ງຈະຕາຍກໍຕາມ ແຕ່ເຫັນພະເຢຊູຕາຍແລ້ວຄືນຈາກຕາຍອີກ ເຊັ່ນດຽວ ກັນ ພະອົງຈະຢູ່ນໍາໃນເວລາຕາຍ ແລ້ວຈະຍົກຂ້ອຍໃຫ້ຄືນຂຶ້ນອີກ".

**24** ກ. ຕັ້ງແຕ່ພະເຢຊູຄືນພະຊົນຈົນເຖິງສະເດັດສູ່ສະຫວັນມີຈັກມື້? ____________________

ຂ. ໃນຄາວນັ້ນ ພະເຢຊູປາກົດຕົວຕໍ່ພວກລູກສິດຈັກເທື່ອ? _______________________

**25** ການຄືນພະຊົນພິສູດດັ່ງຕໍ່ໄປນີ້: (ຕື່ມຄວາມທີ່ຂາດ)

ກ. ພະເຢຊູເປັນມະນຸດແທ້ ແລະເປັນ ____________________________________ແທ້.

ຂ. _________________________________ຊົງຮັບການບູຊາຂອງພະເຢຊູແທນບາບເຮົາ.

ຄ. ຜູ້ທີ່ໄວ້ວາງໃຈໃນພະອົງຈະຄືນຈາກຕາຍໂດຍຮ່າງກາຍອັນເກົ່າທີ່ປ່ຽນ _____________ ເໝືອນພະເຢຊູ.

**26** ກ. ແມ່ນຮ່າງກາຍຫຼືຈິດວິນຍານຂອງພະອົງທີ່ຖືກຝັງໃນອຸບໂມງ? ___________________

ຂ. ແມ່ນສ່ວນໃດທີ່ລົງແດນມໍລະນາ? ____________________________________

ຄ. ເມື່ອພະອົງຄືນພະຊົນ ທັງຮ່າງກາຍແລະຈິດວິນຍານກັບເຂົ້າ __________ ກັນອີກ. (ຕື່ມ)

**27** ໃຫ້ທວນຄືນອີກ

ກ. ມີຈັກມື້ລະຫວ່າງການສິ້ນພະຊົນແລະການຄືນພະຊົນ? ________________________

ຂ. ໃນຄາວ 3 ມື້ນັ້ນຮ່າງກາຍຂອງພະອົງຢູ່ໃສ? ________________________________

ຄ. ຈິດວິນຍານຢູ່ໃສ? ________________________________________________

ງ. ແມ່ນນະຣົກຫຼືແດນມໍລະນາທີ່ມີໄຟບໍ່ຮູ້ມອດ? ______________________________

ຈ. ພະເຢຊູລົງໄປນະຣົກຫຼືແດນມໍລະນາ? ____________________________________

## ລະຫວ່າງການສະເດັດສູ່ສະຫວັນເຖິງວັນເພັນເຕຄໍສະເຕ

**28** ກ. 40 ມື້ຫຼັງຈາກຄືນພະຊົນ ພະເຢຊູສະເດັດສູ່ສະຫວັນ. ພະອົງໄປຈັດແຈງບ່ອນໄວ້ສຳລັບໃຜ? ________________________________________________________

ຂ. ຈັດໄວ້ຢູ່ໃສ? ____________________________________________________

**29** ເຫດການແຕ່ລະປະການນັ້ນມີສ່ວນໃນແຜນການຂອງພະເຈົ້າ. (ຕື່ມຄວາມທີ່ຂາດ)

ກ. ທີ່ພະເຢຊູຕາຍຖືກຝັງໄວ້ແລະລົງແດນມໍລະນາ ສະແດງວ່າພະອົງເຂົ້າຮ່ວມກັບມະນຸດເຮົາ ເພາະເມື່ອພະອົງຕາຍ___________ ແລະ ______________ ແຍກກັນໄປຄາວໜຶ່ງ.

ຂ. ການຄືນພະຊົນສະແດງວ່າ ຮ່າງກາຍແລະຈິດວິນຍານຈະກັບເຂົ້າ __________ ກັນອີກ.

ຄ. ທີ່ພະອົງສະເດັດສູ່ສະຫວັນສະແດງວ່າ ພະອົງຈະໄປ________ ບ່ອນໄວ້ສຳລັບພວກເຮົາ.

**30** ກ. ມີໄລຍະຈັກວັນຈາກທີ່ພະເຢຊູສະເດັດສູ່ສະຫວັນເຖິງວັນເພັນເຕຄໍສະເຕ? __________

ຂ. ໃນ ກຈກ 1:4 ພະເຢຊູສັ່ງພວກສາວົກໃຫ້ເຮັດຫຍັງໃນກຸງເຢລູຊາເລັມ?____________

ຄ. ໃນ ກຈກ 1:5 ພະບິດາສັນຍາຫຍັງ? ____________________________________

**31** ໃຫ້ອ່ານ ກຈກ 1:12-14

ກ. ໃນລະຍະ 10 ວັນນັ້ນ ພວກສາວົກໄປຄອຍຖ້າຢູ່ໃສ? ________________________

ຂ. ເຂົາຄອຍຖ້າໃຜໃນກຸງເຢລູຊາເລັມ? ____________________________________

**32** ໃຫ້ອ່ານ ກຈກ 1:21-26

ກ. ໃນ 10 ວັນນັ້ນ ພວກສາວົກເລືອກເອົາຄົນຜູ້ໜຶ່ງຮັບຕຳແໜ່ງແທນໃຜ? ____________

ຂ. ເຂົາອ້ອນວອນແລ້ວຈົກສະຫຼາກກັນລະຫວ່າງສອງຄົນ ສະຫຼາກນັ້ນຕົກໃສ່ໃຜ? _______

**33** ກ. ໃນລະຍະ 10 ມື້ນັ້ນ ພວກສາວົກຄອຍຫຍັງ? ______________________________

ຂ. ເລືອກຫຍັງ? ____________________________________________________

**34** ໃນລະຍະ 52 ວັນນັ້ນ ມີເຫດການສຳຄັນ 4 ປະການທີ່ບັນທຶກໄວ້ໃນສອງບົດສຸດທ້າຍຂອງ ຂ່າວປະເສີດມັດທາຍ ແລະ ສອງບົດທຳອິດຂອງພະທຳກິດຈະການ. ໃຫ້ທ່ານຈົດທັງເຫດການ ແລະບົດໃນພະຄຳພີທີ່ລາຍງານ

| | ເຫດການ | ບົດໃນພະທຳ |
|---|---|---|
| ກ. | ______________________ | ______________ |
| ຂ. | ______________________ | ______________ |
| ຄ. | ______________________ | ______________ |
| ງ. | ______________________ | ______________ |

**35** ກ. ມີລະຍະຈັກວັນຈາກການສິ້ນພະຊົນເຖິງການຄືນພະຊົນ? ______________

ຂ. ເຂົາຝັງສົບຂອງພະອົງໄວ້ບ່ອນໃດ? ______________

ຄ. ອຸບໂມງນັ້ນເປັນຂອງໃຜ? ______________

ງ. ຈິດວິນຍານຂອງພະອົງລົງໄປໃສ? ______________

ຈ. ໃນຄາວ 3 ວັນນັ້ນມີສອງສ່ວນໃດທີ່ແຍກຈາກກັນ? __________ ແລະ __________

**36** ກ. ມີລະຍະຈັກວັນຈາກການຄືນພະຊົນເຖິງການສະເດັດສູ່ສະຫວັນ? ______________

ຂ. ໃນຄາວນັ້ນ ພະອົງປາກົດຕໍ່ພວກລູກສິດຈັກເທື່ອ? ______________

ຄ. ການສິ້ນພະຊົນ ສະແດງວ່າໃນເມື່ອເຮົາຈະຄືນໂດຍມີລັກສະນະໃໝ່ ຈິດວິນຍານແລະຮ່າງ ກາຍທີ່ແຍກກັນໄປ ແລ້ວຈະກັບມາເປັນຢ່າງໃດ? ______________

**37** ກ. ມີລະຍະຈັກມື້ຈາກການສະເດັດສູ່ສະຫວັນເຖິງວັນເພັນເຕຄໍສະເຕ? ______________

ຂ. ຜົນຮັບຢ່າງດີປະການໜຶ່ງທີ່ພະເຢຊູຂຶ້ນເມືອສະຫວັນຄືພະອົງຈະໄປຈັດແຈງຫຍັງໄວ້?

______________________________

ຄ. ໃນເວລາ 10 ມື້ນັ້ນ ພວກສາວົກຄອຍຖ້າໃຜ? ______________

ງ. ເຂົາຈົກສະຫຼາກເພື່ອຫຍັງ? ______________

**38** ກ. ຄຳວ່າ "ເພັນເຕຄໍສະເຕ" ໃນພາສາກະລີກແປວ່າຫຍັງ? ______________

ຂ. ພະວິນຍານບໍລິສຸດສະເດັດມາຈັກວັນຫຼັງຈາກການຄືນພະຊົນ? ______________

ຄ. ພະວິນຍານບໍລິສຸດສະເດັດລົງມາວັນເທດສະການໃດ? ______________

## ລະຫວ່າງວັນເພັນເຕຄໍສະເຕເຖິງການສະເດັດມາເທື່ອທີສອງ

**39** ຂ່າວປະເສີດຂອງພະເຢຊູບໍ່ໄດ້ສິ້ນສຸດລົງເທື່ອ. ພະອົງຍັງປ່າວປະກາດຢູ່ທາງປາກຂອງ ຄຣິດສະຕຽນໂດຍອຳນາດຂອງ ພະວິນຍານບໍລິສຸດ.

ກ. ຍຸກສະໄໝຂອງພະວິນຍານບໍລິສຸດເຮົານີ້ ຈະສິ້ນສຸດລົງກັບເຫດການໃດ? (ກຈກ 1:11)

______________________________

ຂ. ໃຫ້ອ່ານ ກຈກ 1:7 ແລະ ມທ 24:36. ແມ່ນໃຜທີ່ຮູ້ຈັກວັນເວລາທີ່ພະອົງຈະມາອີກ?

__________________________________________________

ຄ. ປະຈຸບັນນີ້ ການປ່າວປະກາດຂ່າວປະເສີດຂຶ້ນຢູ່ກັບໃຜ? ________________________

ໂດຍອຳນາດຂອງໃຜ? ______________________________________________

*ໃນບົດຕໍ່ໄປ ເຮົາຈະຮຽນຮູ້ເລື່ອງພະວິນຍານບໍລິສຸດທີ່ສະຖິດຢູ່ກັບຜູ້ທີ່ໄວ້ວາງໃຈໃນພະອົງໃນປະຈຸບັນ.*

ໃຫ້ທ່ານຕຽມຕົວກ່ອນປະຊຸມເທື່ອໜ້າໂດຍອ່ານ ເອເຟໂຊ 4:7-10

*ຢ່າລືມບົດເສັງທີ 5!*

**ຄຳຕອບ:**

**1** *ກ. ການສິ້ນພະຊົນ ຂ. ການຄືນພະຊົນ ຄ. ການສະເດັດສູ່ສະຫວັນ ງ. ພະວິນຍານບໍລິສຸດສະເດັດມາ*

**2** *ກ. ມທ 27 ຂ. ມທ 28 ຄ. ກຈກ 1 ງ. ກຈກ 2*

**3** *ກ. ການສະເດັດສູ່ສະຫວັນ ຂ. ການສິ້ນພະຊົນ ຄ. ການຄືນພະຊົນ ງ. ການສະເດັດມາຂອງພະວິນຍານບໍລິສຸດ*

**4** *ກ. ການສິ້ນພະຊົນ ຂ. ການຄືນພະຊົນ ຄ. ການສະເດັດສູ່ສະຫວັນ ແລະ ການ ສະເດັດມາຂອງພະວິນຍານບໍລິສຸດ*

**5** *ກ. 3 ວັນ ຂ. 40 ວັນ*

**6** *ກ. 43 ຂ. ດ້ວຍພະວິນຍານບໍລິສຸດ*

**7** *ເພັນເຕຄໍສະເຕ*

**8** *ກ. ພະອົງຄືນພະຊົນ ຂ. ພະວິນຍານບໍລິສຸດສະເດັດມາ*

**9** *ກ. ຫ້າສິບ ຂ. 50 ມື້*

**10** *ກ. 3 ຂ. 10 ຄ. 40 ງ. 53*

**11** *52 ວັນ*

**12** *ກ. ອຸບໂມງ ຂ. ໂຢເຊັບໄທບ້ານອາລີມາທາຍ ຄ. ແດນມໍລະນາ*

**13** *ຄ ຖືກ*

**14** *ແດນມໍລະນາ*

**15** *ນະຣົກ*

**16** *ໄປແດນມໍລະນາ*

**17** *ແດນມໍລະນາ*

**18** *ກ. ອຸບໂມງ ຂ. ແດນມໍລະນາ*

**19** *ກ. 40 ມື້ ຂ. 10 ເທື່ອ*

**ຄຳຕອບ (ຕໍ່):**

**20** *ກ. ພະເຈົ້າ ຂ. ພະບິດາເຈົ້າ ຄ. ລັກສະນະ*

**21** *ກ. ແດນມໍລະນາ ຂ. ເປື່ອຍເນົ່າໄປ ຄ. ຈິດວິນຍານ*

**22** *ກ. ຮ່າງກາຍ... ຈິດວິນຍານ ຂ. ຮ່າງກາຍ... ຈິດວິນຍານ*

**23** *ຄ ຖືກ*

**24** *ກ. 40 ຂ. 10 ເທື່ອ*

**25** *ກ. ພະເຈົ້າ ຂ. ພະບິດາເຈົ້າ ຄ. ລັກສະນະໃໝ່*

**26** *ກ. ຮ່າງກາຍ ຂ. ຈິດວິນຍານ ຄ. ຮວມ*

**27** *ກ. 3 ຂ. ອຸບໂມງ ຄ. ແດນມໍລະນາ ງ. ນະຮົກ ຈ. ແດນມໍລະນາ*

**28** *ກ. ລູກສິດພະອົງ (ພວກເຮົາ) ຂ. ສະຫວັນ*

**29** *ກ. ຮ່າງກາຍ... ຈິດວິນຍານ ຂ. ຮວມ ຄ. ຈັດແຈງ*

**30** *ກ. 10 ວັນ ຂ. ຄອຍ (ຮັບຕາມພະສັນຍາ) ຄ. ພະວິນຍານບໍລິສຸດ*

**31** *ກ. ກຸງເຢລູຊາເລັມ ຂ. ພະວິນຍານບໍລິສຸດ*

**32** *ກ. ຢູດາ ຂ. ມັດທາຍ*

**33** *ກ. ພະວິນຍານບໍລິສຸດ ຂ. ສາວົກແທນຢູດາ*

**34** *ກ. ການສິ້ນພະຊົນ ມທ 27 ຂ. ການຄືນພະຊົນ ມທ 28*
*ຄ. ການສະເດັດສູ່ສະຫວັນ ກຈກ 1*
*ງ. ການສະເດັດມາຂອງພະວິນຍານ (ວັນເພັນເຕຄໍສະເຕ); ກຈກ 2*

**35** *ກ. 3 ຂ. ອຸບໂມງ ຄ. ໂຢເຊັບໄທບ້ານອາລິມາທາຍ ງ. ແດນມໍລະນາ*
*ຈ. ຮ່າງກາຍ ແລະ ຈິດວິນຍານ (ຂອງພະອົງ)*

**36** *ກ. 40 ຂ. 10 ເທື່ອ ຄ. ຮວມເຂົາກັນອີກ*

**37** *ກ. 10 ຂ. ບ່ອນຢູ່ສຳລັບພວກເຮົາ ຄ. ພະວິນຍານບໍລິສຸດ*
*ງ. ເລືອກຄົນເຂົ້າແທນຕຳແໜ່ງຢູດາ*

**38** *ກ. 50 ຂ. 50 ວັນ ຄ. ເພັນເຕຄໍສະເຕ*

**39** *ກ. ການສະເດັດມາອີກ ຂ. ພະບິດາ ຄ. ພວກຄຼິດສະຕຽນເຮົາ ພະວິນຍານບໍລິສຸດ*